ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສ ປປ ລາວ ມີຜົນຄືບໜ້າໃນວຽກງານ ຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ




ຄະນະກໍາມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍໄດ້ຈັດຕັ້ງກອງປະຊຸມຄະນະກໍາມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍສະໄໝສາມັນຄັ້ງທີ I ປະຈໍາປີ 2018 ຢ່າງເປັນທາງການໃນວັນທີ 12 ມີນາ 2018 ເຊິ່ງໄດ້ດໍາເນີນມາເປັນເວລາເຄິ່ງມື້ຢູ່ຫ້ອງປະຊຸມທະນາຄານແຫ່ງ ສປປ ລາວ ທີ່ນະຄອນຫຼວງວຽງຈັນ, ໂດຍພາຍໃຕ້ການເປັນປະທານຂອງ ທ່ານ ສົມດີ ດວງດີ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ປະທານຄະນະກໍາມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ພ້ອມນີ້ ຍັງມີຮອງປະທານ ແລະ ບັນດາສະມາຊິກຄະນະກໍາມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍທີ່ເປັນການນໍາລະດັບສູງຈາກບັນດາກະຊວງ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້ໄດ້ດໍາເນີນໄປຕາມລະບອບແບບແຜນວິທີເຮັດວຽກຂອງຄະນະກໍາມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍໂດຍໄດ້ມີການລາຍງານເຖິງຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານທີ່ຜ່ານມາກໍຄືມະຕິຂອງກອງປະຊຸມສະໄໝສາມັນຄັ້ງທີ III ປີ 2017 ແລະ ຍັງໄດ້ປຶກສາຫາລືບາງບັນຫາທີ່ພົ້ນເດັ່ນກ່ຽວກັບວຽກງານການຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍໂດຍສະເພາະກ່ຽວກັບຜົນການປະເມີນ

ເບື້ອງຕົ້ນຄວາມສ່ຽງລະດັບຊາດການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ການສ້າງຄວາມສາມາດໃຫ້ບັນດາຂະແໜງການຕິດພັນກັບການສືບສວນ-ສອບສວນຄະດີການຟອກເງິນ ແລະ ການປັບປຸງກົນໄກການດຳເນີນງານ, ປະສານງານພາກສ່ວນກ່ຽວຂ້ອງເພື່ອຮັບຮອງການຈັດຕັ້ງປະຕິບັດ 40 ຂໍ້ແນະນຳຂອງອົງການຕ້ານການຟອກເງິນສາກົນ (FATF) ແລະ ບັນຫາອື່ນໆທີ່ປິ່ນອ້ອມອີກຈຳນວນໜຶ່ງ.




ທ່ານນາງ ແພງສີ ແພງເມືອງ ຫົວໜ້າສຳນັກງານຂໍ້ມູນຕ້ານການຟອກເງິນ ໄດ້ລາຍງານຢ່າງຈະແຈ້ງກ່ຽວກັບການຈັດຕັ້ງປະຕິບັດມະຕິຂອງຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍໃນຄັ້ງກ່ອນ; ການຈັດຕັ້ງປະຕິບັດວຽກງານຂອງສຳນັກງານຂໍ້ມູນຕ້ານການຟອກເງິນ; ການເຂົ້າເປັນສະມາຊິກກຸ່ມຮ່ວມມືໃນການແລກປ່ຽນຂໍ້ມູນລະຫວ່າງໜ່ວຍງານຂໍ້ມູນຕ້ານການຟອກເງິນສາກົນ (Egmont Group) ແລະ ບັນຫາອື່ນໆ ລວມທັງ 4 ຂໍ້ແນະນຳຂອງກຸ່ມອາຊີ-ປາຊີຟິກ ເພື່ອຕ້ານການຟອກເງິນ (APG); ການຮ່ວມມືສາກົນ ແລະ ການສ້າງຜູ້ປະເມີນ.

ທັງໝົດນັ້ນກໍເພື່ອຮັບປະກັນບໍ່ໃຫ້ ສປປ ລາວຕົກຢູ່ໃນການຕິດຕາມຂອງສາກົນກ່ຽວກັບວຽກງານ AML/CFT ແລະ ກະກຽມໃຫ້ແກ່ການປະເມີນສປປ ລາວຮອບດ້ານກ່ຽວກັບວຽກງານ AML/CFT (Mutual Evaluation “ME”) ໃນປີ 2020 ແລະ ຍັງເປັນການປຶກສາຫາລືເຖິງຄວາມຄືບໜ້າທີ່ ສປປ ລາວ ໄດ້ມີການຈັດຕັ້ງປະຕິບັດກ່ຽວກັບວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍຕາມແຜນການທີ່ວາງໄວ້ແລະ ເພື່ອເຮັດໃຫ້ລະບົບເສດຖະກິດ-ການເງິນ ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມເຂັ້ມແຂງ, ໝັ້ນຄົງ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ໃຊ້ເງິນກີບທົ່ວທັງຊາດສ້າງບົດບາດຄ່າເງິນກີບລາວ